# Happy lao new year

# ສະບາຍດີປີໃໝ່ ຈຸລະສັກລາດ 1368

## Chounlasakalat 1368 (Buddhist Year 2549)

## ( ພຸທະສັກລາດ 2549 )

**April 2006** — ຈາກໃຈຂອງຜູ້ພິມ "ນິຕຍະສາຣລາວແນັດທ໌"

As you might have already noticed, we changed the look of our magazine slightly. This is so we could comply with the Postmaster's mailing label requirements and to address constructive criticism from our readers.

As many readers of our Laotian articles thought that the size of the Laotian characters were too small, we are beginning to print Laotian articles with larger fonts.

Although a few readers told us that there are too many legal articles, many readers complimented those articles and asked for more. We complied. In fact, most of our paid subscribers told us that they paid for the subscription only for the legal articles.

LAONET MAGAZINE would like to thank all those who called us with their thoughts. We also graciously express our thanks to our advertisers and paid subscribers, for they allow us to continue bringing you this publication.

Finally, we wish to thank all those who submitted articles to publish in LAONET, in particular Dr. Jon Sivoravong, D.O., and Mr. Bounhong Khommarath, the former editor-in-chief of a Lao newspaper in San Diego. We also received compliments from the former editor-in-chief of Sieng Khene Magazine, Mr. Bounthong Inthachack, who promised to contribute articles to future issues. We very much appreciate the help that many of you give us by distributing our magazine and encouraging prospective subscribers.

With all the encouragements and helps you give us, we will make sure that LAONET MAGAZINE will continue to earn your trust and support.

The Publisher

ດັ່ງທີ່ທ່ານ ອາດຈະ ສັງເກດເຫັນ ລາວແນັດທ໌ ໄດ້ປ່ຽນແປງໂສມໜ້າປົກ ຂຶ້ນມານ້ອຍນຶ່ງ ເພື່ອເຮັດຕາມກົດ ໄປສະນີ ແລະການຕິເພື່ອກໍ່ດ້ວຍຄວາມຫວັງດີຂອງທ່ານຜູ້ອ່ານ. ພວກເຮົາຍັງໄດ້ທຳການຂຍາຍ ຕົວລາວ ໃຫ້ເປັນຕົວໃຫຍ່ຂຶ້ນມາກວ່າເດີມ ເພາະ ບັນດາ ທ່ານ ຜູ້ອ່ານ ພາສາ ລາວ ຫລາຍໆ ທ່ານ ໄດ້ທຳການ ຕິເຂົ້າມາວ່າ ຕົວລາວນັ້ນ ພິມນ້ອຍ ຈົນໂພດໄປ.

ເຖິງແມ່ນວ່າທ່ານຜູ້ອ່ານ ສອງສາມທ່ານ ຕິວ່າ ພວກເຮົາພິມບົດຄວາມ ກົດໝາຍຫລາຍເກີນໄປໂພດ ທ່ານຜູ້ອ່ານ ສ່ວນຫລາຍພັດຍ້ອງບົດຄວາມນັ້ນ ແລະຂໍໃຫ້ພວກເຮົາພຍາຍາມ ຂຽນໃຫ້ຫລາຍຂຶ້ນກວ່າເດີມ, ເຮົາຈຶ່ງເຮັດຕາມ ຕາມຄວາມເປັນຈິງແລ້ວທ່ານຜູ້ອ່ານທີ່ໄດ້ຈ່າຍຄ່າຈອງ ນິຕຍະສາຣ ເຮົາ ສ່ວນ ຫລາຍບອກເຮົາວ່າ ທ່ານຈອງເພື່ອຢາກຈະໄດ້ອ່ານ ບົດຄວາມທາງດ້ານກົດໝາຍ.

ລາວແນັດທ໌ ຂໍຂອບໃຈ ທຸກໆທ່ານ ທີ່ໄດ້ໃຫ້ຄຳແນະນຳ ມາເຖິງຄນະກອງບັນນາທິການພວກເຮົາ ດ້ວຍ ຄວາມຫວັງດີ ແລະໂດຍ ສະເພາະ ທ່ານ ຜູ້ທີ່ໂຄສະນາ ແລະ ທ່ານຜູ້ທີ່ໄດ້ຊ່ອຍຈ່າຍ ເພື່ອ ຈອງ ນິຕຍະສາຣ ເຮົາ ພວກ ເຮົາ ຍັງຈະດຳ ເນີນ ນິຕ ຍະສາຣ ສະບັບ ນີ້ຕໍ່ໄປເລື້ອຍໆ ເພື່ອໃຫ້ທ່ານ ໄດ້ອ່ານ.

ສຸດທ້າຍນີ້ ພວກເຮົາ ຂໍຂອບໃຈ ກັບທຸກໆທ່ານ ທີ່ໄດ້ສົ່ງບົດຄວາມມາໃຫ້ເຮົາພິມເຜີຍແຜ່ ໂດຍສະເພາະ ທ່ານ ດຣ. ຈອນ ສີວໍຣະວົງສ໌ ແລະທ່ານ ອາຈາຣ ບຸນຫົງ ຄົມມະຣາດ ອະດີດ ບັນນາທິການໜັງ ສືພິມລາວ ທີ່ ເມືອງ ແຊັນດີເອໂກ້ ພວກເຮົາ ໄດ້ຮັບ ຄຳຊົມ ເຊີຍຍ້ອງຍໍ ແລະ ຄຳແນະນຳ ມາຈາກ ອະດີດ ບັນນາທິການສຽງແຄນ ທ່ານບຸນທົງ ອິນທະຈັກ ຊຶ່ງຮັບ ຈະ ຊ່ອຍຂຽນ ບົດຄວາມເຂົ້າມາຮ່ວມໃນອະນາຄົດ.

ພວກເຮົາ ຂໍຂອບໃຈ ການຊ່ອຍເຫລືອແຈກ ແລະ ຊ່ອຍຫາຄົນຈັບຈອງ ລາວແນັດທ໌ໃຫ້ ໂດຍສະເພາະ ຄອບຄົວ ສີຣິ ທີ່ ເມືອງຣິເວີຊາຍ ຣັກຄາລີຟໍເນັຽ. ລາວແນັດທ໌ ຈະ ພຍາຍາມ ເຮັດທຸກວິທີທາງເພື່ອເຮັດໃຫ້ ສົມ ກັບການເຊື່ອຖື ແລະສນັບສນູນ ຊຸກຍູ້ຂອງທ່ານ.

ຈາກຜູ້ພິມ